ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 1626 /ກງ

ນະຄອນຫລວງວຽງຈັນ,ວັນທີ 30 ພຶດສະພາ 2019.

# ແຈ້ງການ

**ເຖິງ : ຂະແໜງພາສີ, ຂະແໜງສ່ວຍສາອາກອນ, ບັນດາຫົວໜ່ວຍທຸລະກິດໃນຂອບເຂດທົ່ວປະເທດ.**

**ເລື່ອງ : ການຄຸ້ມຄອງສາງ ສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ.**

- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ແລະ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011ແລະ ກົດໝາຍວ່າດ້ວຍພາສີສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມດຳລັດສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ;
- ອີງຕາມແຈ້ງການກະຊວງການເງິນ ສະບັບເລກທີ 3463/ກງ, ລົງວັນທີ 29 ຕຸລາ 2018 ກ່ຽວກັບການນຳໃຊ້ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟ (ເສຍພາສີ-ອາກອນ) ດ້ວຍຕົນເອງບໍ່ 88;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມສ່ວຍສາອາກອນ ສະບັບເລກທີ 2075/ກສອ, ລົງວັນທີ 28 ພຶດສະພາ 2019.

ເພື່ອເຮັດໃຫ້ການຄຸ້ມຄອງ, ການຕິດຕາມ ແລະ ການກວດກາ ສາງສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ຖືກຕ້ອງຕາມລະບຽບກົດໝາຍ ແລະ ເປັນເງື່ອນໄຂເອື້ອອຳນວຍໃນການດຳເນີນທຸລະກິດ, ການເກັບພັນທະພາສີ, ອາກອນປະເພດຕ່າງໆເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກັບເວລາ ແລະ ກົດໝາຍທີ່ກຳນົດ.

**ກະຊວງການເງິນ ອອກແຈ້ງການ ດັ່ງນີ້:**

1. ບັນດາຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດຂາອອກ-ຂາເຂົ້າຢູ່ພາຍໃນປະເທດ ທີ່ນຳເຂົ້າ ສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ, ເພື່ອຈຳໜ່າຍຂາຍຍົກ-ຂາຍຍ່ອຍ ລວມທັງບັນດາຫົວໜ່ວຍທຸລະກິດທີ່ດຳເນີນການຜະລິດປຸງແຕ່ງຕ່າງໆ ຕ້ອງໄດ້ມີລະບົບສາງສິນຄ້າເປັນຂອງຕົນເອງ. ສຳລັບ ສິນຄ້າຕ້ອງໄດ້ກວດນັບສິນຄ້າຢູ່ໃນສາງຢ່າງເປັນປົກກະຕິ ແລະ ຕ້ອງໄດ້ຖືບັນຊີສາງດ້ວຍລະບົບບັນທຶກດ້ວຍມື ຫຼື ລະບົບອີເລັກໂຕຣນິກ ທີ່ສາມາດກວດສອບໄດ້ທຸກເວລາ, ລາຍລະອຽດໃນການຈັດຕັ້ງປະຕິບັດ ມີດັ່ງນີ້:

1.1. ສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ເວລານຳອອກຈາກດ່ານພາສີ ຫຼື ສາງບ່ອນນຳເຂົ້າຕ້ອງມີໃບແຈ້ງພາສີເປັນລາຍລະອຽດ ແລະມີເອກະສານກ່ຽວຂ້ອງຄັດຕິດ ແລະ ຜ່ານການກວດກາຂອງເຈົ້າໜ້າທີ່ພາສີກ່ອນຈະນຳອອກຈາກດ່ານພາສີ ດ້ວຍຫຼາຍຮູບແບບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍພາສີ ເຖິງວ່າສິນຄ້າດັ່ງກ່າວນັ້ນຈະຖືກຍົກເວັ້ນ ຫຼື ງົດເກັບພາສີ ກໍ່ຕາມ;

1.2. ການເຄື່ອນຍ້າຍສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ທຸກຄັ້ງຕ້ອງໄດ້ລະບຸເປົ້າໝາຍສາງສິນຄ້າທີ່ຈະເປັນບ່ອນລົງຢ່າງຈະແຈ້ງ ໂດຍມີເອກະສານການເຄື່ອນຍ້າຍ ດັ່ງນີ້:

- **<u>ນ້ຳມັນເຊື້ອໄຟ ແລະ ອາຍແກັສ</u>** :
  - ການເຄື່ອນຍ້າຍທີ່ບໍ່ແມ່ນການຂາຍ, ເຄື່ອນຍ້າຍຈາກສາງຫາສາງ, ແຂວງຫາແຂວງ, ແຂວງຫາເມືອງ, ເມືອງຫາເມືອງ ຫຼື ເມືອງຫາແຂວງ ຕ້ອງມີໃບເຄື່ອນຍ້າຍດ້ວຍຕົນເອງ (ບໍ 88), ໃບສັ່ງຈ່າຍສິນຄ້າອອກສາງ, ໃບເກັບເງິນ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;
  - ນ້ຳມັນເຊື້ອໄຟທີ່ນຳເຂົ້າເພື່ອຂາຍ ແລະ ເຄື່ອນຍ້າຍ ຕ້ອງມີສຳເນົາໃບແຈ້ງພາສີຂາເຂົ້າ ຄັດຕິດຊ້ອນທ້າຍທຸກຄັ້ງໃສ່ແບບຟອມ ບໍ 88 ແລະ ກໍລະນີ ນ້ຳມັນເຊື້ອໄຟທີ່ຊື້-ຂາຍຢູ່ພາຍໃນປະເທດ ເພື່ອເຄື່ອນຍ້າຍຕ້ອງປະກອບໃບເກັບເງິນອາກອນມູນຄ່າເພີ່ມ, ສັນຍາຊື້-ຂາຍ (ຖ້າມີ) ຄັດຕິດຊ້ອນທ້າຍທຸກຄັ້ງໃສ່ແບບຟອມ ບໍ 88;

- **<u>ສິນຄ້າອຸປະໂພກ, ບໍລິໂພກ ແລະ ສິນຄ້າອື່ນໆ</u>** :
  - ການເຄື່ອນຍ້າຍສິນຄ້າ ທີ່ບໍ່ແມ່ນການຂາຍ ທຸກຄັ້ງທີ່ເຄື່ອນຍ້າຍຈາກສາງຫາສາງ, ແຂວງຫາແຂວງ, ແຂວງຫາເມືອງ, ເມືອງຫາເມືອງ ຫຼື ເມືອງຫາແຂວງ ຕ້ອງມີສຳເນົາໃບແຈ້ງພາສີຂາເຂົ້າຄັດຕິດໃສ່ແບບຟອມການເຄື່ອນຍ້າຍຂອງຂະແໜງສ່ວຍສາອາກອນ ກຳນົດ; ກໍລະນີສິນຄ້າທີ່ຊື້ຢູ່ພາຍໃນປະເທດ ເພື່ອເຄື່ອນຍ້າຍໄປຂາຍຕໍ່ ຕ້ອງປະກອບໃບເກັບເງິນອາກອນມູນຄ່າເພີ່ມໃສ່ແບບຟອມການເຄື່ອນຍ້າຍຂອງຂະແໜງສ່ວຍສາອາກອນ ກຳນົດ;
  - ສິນຄ້າທີ່ນຳເຂົ້າ ເພື່ອສົ່ງອອກຕໍ່ປະເທດທີ່ສາມ (ສິນຄ້າຜ່ານແດນ) ແມ່ນໃຫ້ນຳເອົາສິນຄ້າເຂົ້າສາງພາສີປະຈຳດ່ານ ເພື່ອກວດກາ, ພາຍຫຼັງເຈົ້າໜ້າທີ່ພາສີກວດກາ ແລະ ອອກໃບແຈ້ງພາສີແລ້ວ ໃຫ້ສາມາດຂົນສົ່ງສິນຄ້າອອກໄປປະເທດທີ່ສາມໂດຍກົງ, ຊຶ່ງບໍ່ຈຳເປັນຕ້ອງໄດ້ນຳສິນຄ້າດັ່ງກ່າວລົງສາງຢູ່ພາຍໃນປະເທດອີກ ແຕ່ຕ້ອງມີການຄຸ້ມຄອງຂອງຂະແໜງພາສີຕາມລະບຽບ ແລະ ກົດໝາຍ, ກໍລະນີຫາກມີການຈຳໜ່າຍພາຍໃນປະເທດ ເຈົ້າໜ້າທີ່ສ່ວຍສາອາກອນຈະມີການຄິດໄລ່ເກັບພັນທະຕ່າງໆຄືນ ພ້ອມທັງປັບໄໝຕາມລະບຽບການ ແລະ ກົດໝາຍ;

1.3. ສິນຄ້າທີ່ນຳເຂົ້າ ແລະ ຊື້ຢູ່ພາຍໃນປະເທດຕ້ອງເອົາເຂົ້າສາງຂອງບໍລິສັດກ່ອນ, ບໍ່ອະນຸຍາດໃຫ້ເອົາສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ໄປຈຳໜ່າຍໂດຍກົງໃຫ້ກັບລູກຄ້າ ໂດຍບໍ່ຜ່ານລະບົບສາງ, ຖ້າພົບເຫັນຈະຖືກດຳເນີນຄະດີຕາມກົດໝາຍ;

1.4. ຫົວໜ່ວຍທຸລະກິດໃດ ຫາກບໍ່ມີລະບົບສາງສິນຄ້າເປັນຂອງຕົນເອງ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າ-ສົ່ງອອກສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ, ສຳລັບມາດຕະຖານຂອງສາງສິນຄ້າ ແມ່ນຕ້ອງໄດ້ປະຕິບັດຕາມເງື່ອນໄຂຂອງກິດຈະການທີ່ຂະແໜງກ່ຽວຂ້ອງອະນຸຍາດ;

1.5. ທຸກຄັ້ງທີ່ມີການນຳສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ມາລົງສາງ ບໍລິສັດຕ້ອງແຈ້ງເຈົ້າໜ້າທີ່ສ່ວຍສາອາກອນບ່ອນຕົນຂຶ້ນກັບ ຫຼື ບ່ອນສາງຕັ້ງຢູ່ ພ້ອມທັງ ຄັດຕິດເອກະສານທີ່ກ່ຽວກັບການນຳເຂົ້າດັ່ງກ່າວ ເພື່ອກວດກາຄວາມຖືກຕ້ອງ;

1.6. ບໍລິສັດນຳເຂົ້າສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ຕ້ອງລາຍງານບັນຊີສາງ (ພ້ອມທັງສຳເນົາເອກະສານກ່ຽວກັບສິນຄ້າໃນສາງ) ເປັນແຕ່ລະເດືອນ ໃຫ້ຂະແໜງສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ ແລະ ບ່ອນສາງຕັ້ງຢູ່ ບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ເພື່ອຕິດຕາມກວດກາຄືນ;

1.7. ກໍລະນີ ຫາກມີການແຈ້ງ ຂໍຫັກ ຫຼື ຂໍຄືນເງິນອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ຫຼື ອາດມີອາກອນມູນຄ່າເພີ່ມຍົກໄປຫັກຕໍ່ ຕ້ອງມີການກວດກາສາງສິນຄ້າ ແລະ ມີບົດບັນທຶກຢັ້ງຢືນການກວດນັບສາງຈາກເຈົ້າໜ້າທີ່ສ່ວຍສາອາກອນ ຈຶ່ງອະນຸຍາດໃຫ້ຍົກໄປຫັກຕໍ່ ຫຼື ຂໍຄືນໄດ້;

## 2. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຂະແໜງພາສີ ມີດັ່ງນີ້:

2.1. ກວດກາບັນດາເງື່ອນໄຂສໍາລັບຫົວໜ່ວຍທຸລະກິດທີ່ດໍາເນີນການນໍາເຂົ້າ-ສົ່ງອອກສິນຄ້າ, ນໍ້າມັນເຊື້ອໄຟ ແລະ ອາຍແກັສ ຕ້ອງປະຕິບັດ ດັ່ງນີ້:

- ໃບອະນຸຍາດດໍາເນີນທຸລະກິດທີ່ສາມາດນໍາເຂົ້າ-ສົ່ງອອກໄດ້ຕາມປະເພດທຸລະກິດທີ່ໄດ້ຮັບອະນຸຍາດ;
- ໃບຢັ້ງຢືນການມອບພັນທະອາກອນ ຫຼື ໃບທະບຽນອາກອນປະຈໍາປີ;
- ສໍາລັບຫົວໜ່ວຍທຸລະກິດນໍ້າມັນເຊື້ອໄຟ ແລະ ອາຍແກັສ ຕ້ອງມີບົດບັນທຶກກວດກາສະຖານທີ່ຕັ້ງຂອງສາງເກັບມ້ຽນສິນຄ້າທີ່ຢັ້ງຢືນຈາກຂະແໜງກ່ຽວຂ້ອງ, ພາຫະນະໃນການເຄື່ອນຍ້າຍນໍ້າມັນເຊື້ອໄຟ ແລະ ອາຍແກັສ ຕ້ອງໄດ້ມາດຖານ ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ;
- ເວລາອອກໃບແຈ້ງພາສີທຸກຄັ້ງ ໃຫ້ກໍານົດສາງສິນຄ້າປາຍທາງ ແລະ ແຈ້ງລາຍລະອຽດ ກ່ຽວກັບການນໍາເຂົ້າສິນຄ້າ, ນໍ້າເຊື້ອໄຟ ແລະ ອາຍແກັສ ຂອງແຕ່ລະບໍລິສັດ ເພື່ອໃຫ້ເຈົ້າໜ້າທີ່ສ່ວຍສາອາກອນຕິດຕາມ ແລະ ກວດກາສິນຄ້າລົງສາງ ແລະ ການປະຕິບັດພັນທະຕ່າງໆໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມກົດໝາຍກໍານົດ;

2.2. ປະຕິບັດໜ້າທີ່ອື່ນຕາມກົດໝາຍ, ລະບຽບການກໍານົດ ແລະ ການມອບໝາຍຂອງຂັ້ນເທິງ;

## 3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຂະແໜງສ່ວຍສາອາກອນ ມີດັ່ງນີ້:

ຂະແໜງສ່ວຍສາອາກອນດໍາເນີນການ, ຕິດຕາມ, ກວດກາສາງສິນຄ້າທົ່ວໄປ, ສາງນໍ້າມັນເຊື້ອໄຟ ແລະ ອາຍແກັສ ຢູ່ພາຍໃນປະເທດ ລວມການເຄື່ອນຍ້າຍສິນຄ້າ, ນໍ້າມັນເຊື້ອໄຟ ແລະ ອາຍແກັສ ຈາກດ່ານຕ່າງໆ ໄປຍັງສາງສິນຄ້າ, ຈາກສາງສິນຄ້າສະຖານທີ່ໜຶ່ງໄປອີກສະຖານທີ່ໜຶ່ງ, ຈາກສາງສິນຄ້າແຂວງໜຶ່ງໄປແຂວງອື່ນ ແລະ ກວດກາສິນຄ້າໃນສາງຂອງຫົວໜ່ວຍທຸລະກິດຢ່າງເປັນປົກກະຕິ ໃນການກວດກາແຕ່ລະຄັ້ງຕ້ອງມີບົດບັນທຶກຮ່ວມກັນຢ່າງລະອຽດ, ລວມທັງການກວດກາຕາມຄວາມສ່ຽງທີ່ຈະເກີດມີການລັກລອບສິນຄ້າເພື່ອຫຼົບຫຼີກການເສຍພາສີ-ອາກອນ ທີ່ໄດ້ປະເມີນໄວ້ໃຫ້ທ່ວງທັນກັບເວລາດ້ວຍຮູບແບບການກວດກາ ດັ່ງນີ້:

3.1. ການກວດກາຕາມລະບົບປົກກະຕິ ແມ່ນໄດ້ແຈ້ງໃຫ້ຮູ້ລ່ວງໜ້າ ໂດຍປະຕິບັດການກວດກາສາງສິນຄ້າຕາມແຜນການໜຶ່ງຄັ້ງຕໍ່ເດືອນ ແລະ ຕາມການເຄື່ອນໄຫວຕົວຈິງໃນແຕ່ລະຄັ້ງ;

3.2. ການກວດກາແບບກະທັນຫັນແມ່ນບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ ເປັນການກວດກາແບບຮີບດ່ວນ ແລະ ນອກແຜນການຢູ່ສາງສິນຄ້າ ຫຼື ເສັ້ນທາງລະຫວ່າງບ່ອນເຄື່ອນຍ້າຍສິນຄ້າ ຫຼື ສະຖານທີ່ເປົ້າໝາຍໃດໜຶ່ງເມື່ອເຫັນວ່າມີຄວາມຈໍາເປັນຕ້ອງໄດ້ກວດກາຍ້ອນມີຄວາມສົງໃສຈະມີການເຊື່ອງອໍາຈໍານວນສິນຄ້າທັງໝົດຫຼືສ່ວນໃດໜຶ່ງ ແລະ ອື່ນໆທີ່ຈະເປັນສາເຫດໃນການຫຼົບຫຼີກການເສຍພັນທະຕ່າງໆໂດຍບໍ່ຕ້ອງແຈ້ງໃຫ້ເຈົ້າຂອງຫົວໜ່ວຍທຸລະກິດຮູ້ລ່ວງໜ້າ;

3.3. ໃຫ້ກົມສ່ວຍສາອາກອນ ສ້າງເປັນລະບົບປະສານງານ ແລະ ມອບໝາຍໜ້າທີ່ຄວາມຮັບຜິດຊອບ ໃຫ້ເຈົ້າໜ້າທີ່ສ່ວຍສາອາກອນຂັ້ນສູນກາງ ແລະ ທ້ອງຖິ່ນຢ່າງຈະແຈ້ງ ເພື່ອເຮັດໃຫ້ວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະມົນຕີກະຊວງການເງິນໄດ້ຮັບຊາບ ເປັນແຕ່ລະ ງວດ, 6 ເດືອນ ແລະ ປີ;

3.4. ໃຫ້ສ່ວຍສາອາກອນປະຈໍານະຄອນຫຼວງວຽງຈັນ, ບັນດາແຂວງ ສະຫຼຸບລາຍງານຜົນການຄຸ້ມຄອງ ແລະ ກວດກາສາງສິນຄ້າ, ນໍ້າມັນເຊື້ອໄຟ ແລະ ອາຍແກັສ ໃຫ້ກົມສ່ວຍສາອາກອນ ເປັນປົກກະຕິ;

3.5. ໃຫ້ສ່ວຍສາອາກອນປະຈໍາເມືອງ ສືບຕໍ່ຕິດຕາມກວດກາຈົດເລກມິດເຕີຂອງຕູ້ຈ່າຍນໍ້າມັນ (ຫົວຈ່າຍ) ນໍາແຕ່ລະປໍ້າເປັນທີ່ຕັ້ງຢູ່ໃນເມືອງຂອງຕົນ ເປັນແຕ່ລະເດືອນເພື່ອຄິດໄລ່ເກັບອາກອນລາຍໄດ້ ຫລື ອາກອນມູນຄ່າເພີ່ມຕາມໂຄງສ້າງລາຄາໃນແຕ່ລະໄລຍະພ້ອມທັງຄິດໄລ່ອາກອນປະເພດຕ່າງໆຈາກກິດຈະການອື່ນ (ກິດຈະການສໍາຮອງ) ພາຍໃນປໍ້ານໍ້າມັນເຊື້ອໄຟ, ແລະ ໃຫ້ສະຫຼຸບລາຍງານໃຫ້ສ່ວຍສາອາກອນປະຈໍາ

ນະຄອນຫຼວງ/ແຂວງຂອງຕົນ ເພື່ອສັງລວມ ແລະ ລາຍງານຕໍ່ກົມສ່ວຍສາອາກອນ ໂດຍແຍກໃຫ້ເຫັນເປັນແຕ່ລະບໍລິສັດ ແຍກປະເພດສິນຄ້າຢ່າງລະອຽດໃນແຕ່ລະເດືອນຢ່າງເປັນປົກກະຕິ ເພື່ອສົມທຽບ ແລະ ກວດກາຄືນ (ຕາມແບບຟອມທີ່ໄດ້ກຳນົດໄວ້);

## 4. ການຮ່ວມມືກັນໃນກວດກາຂອງຂະແໜງພາສີ ແລະ ຂະແໜງສ່ວຍສາອາກອນ

4.1. ສຳລັບສິນຄ້າ ທີ່ບໍ່ສາມາດກວດກາຢູ່ດ່ານພາສີບ່ອນນຳເຂົ້າໄດ້ ເນື່ອງຈາກ ເປັນສິນຄ້າທີ່ມີຄວາມສ່ຽງຄວາມເສຍຫາຍດ້ານຄຸນນະພາບ ແລະ ປະລິມານ ແມ່ນໃຫ້ ກວດກາ ຢູ່ສາງສິນຄ້າພາຍໃນ ໂດຍໃຫ້ເຈົ້າໜ້າທີ່ທັງສອງພາກສ່ວນປະສານສົມທົບ ແລະ ຮ່ວມກັນກວດກາ, ຮູບແບບ ແລະ ວິທີການກວດກາ ແມ່ນໃຫ້ຫລຸດຜ່ອນການກວດກາຕາມເສັ້ນທາງ ໂດຍຫັນມາກວດກາຢູ່ສາງຂອງຜູ້ປະກອບການ;

4.2. ໃນກໍລະນີສິນຄ້າ ໄດ້ຜ່ານການກວດກາ ແລະ ອອກໃບແຈ້ງພາສີແລ້ວ ມອບໃຫ້ຂະແໜງສ່ວຍສາອາກອນເປັນຜູ້ກວດກາ, ຖ້າມີຂໍ້ມູນບໍ່ຈອດກັນ ຫຼື ບໍ່ຄືກັນ, ເຈົ້າໜ້າທີ່ພາສີ ຄິດໄລ່ພັນທະບໍ່ຖືກຕ້ອງ ແລະ ອື່ນໆ ໃຫ້ທັງສອງພາກສ່ວນປະສານສົມທົບກັນ ເພື່ອຄິດໄລ່ພັນທະຄືນ;

4.3. ໃຫ້ທັງສອງຂະແໜງ ແຕ່ງຕັ້ງຄະນະປະສານງານ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ມີການແລກປ່ຽນດ້ານເຕັກນິກວິຊາການ, ການສະໜອງຂໍ້ມູນຊຶ່ງກັນ ແລະ ກັນ ຢ່າງເປັນປົກກະຕິ;

## 5. ມາດຕະການຕໍ່ຜູ້ລະເມີດ

5.1. ກໍລະນີກວດກາພົບເຫັນສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ທີ່ຫົວໜ່ວຍທຸລະກິດບໍ່ມີເອກະສານຢັ້ງຢືນຖືກຕ້ອງ, ຫຼືບຫຼີກເຊື່ອງອຳຈຳນວນສິນຄ້າ ແລະ ການກວດນັບສິນຄ້າໃນສາງ ຫາກພົບເຫັນວ່າມີຈຳນວນສິນຄ້າຕົວຈິງບໍ່ຖືກກັບບັນຊີ ທີ່ສະຫຼຸບລາຍງານຕໍ່ຂະແໜງສ່ວຍສາອາກອນ ຈະຄິດໄລ່ພັນທະຕ່າງໆຄືນ, ພ້ອມດ້ວຍປັບໄໝ ແລະ ປະຕິບັດມາດຕະການຕາມກົດໝາຍວ່າດ້ວຍສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ;

5.2. ຖ້າບໍລິສັດນຳເຂົ້າສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ບໍ່ມີສາງສິນຄ້າ ເປັນຂອງຕົນທີ່ໄດ້ມີການດຳເນີນທຸລະກິດຜ່ານມາແລ້ວ ແມ່ນໃຫ້ຢຸດຕິການນຳເຂົ້າເປັນການຊົ່ວຄາວກ່ອນພາຍໃນ 3 ເດືອນນັບແຕ່ມື້ອອກແຈ້ງການສະບັບນີ້ ຖ້າຄົບກຳນົດ ເວລາແລ້ວຍັງບໍ່ມີສາງສິນຄ້າຕາມກຳນົດແມ່ນສາມາດຕໍ່ເວລາໄດ້ອີກ 3 ເດືອນເພື່ອປັບປຸງ ແລະ ຖ້າຄົບກຳນົດເວລາຄັ້ງທີ່ສອງແລ້ວຍັງບໍ່ມີສາງສິນຄ້າ ແມ່ນໃຫ້ຍົກເລີກການອະນຸຍາດໃຫ້ນຳເຂົ້າ, ຈົນກວ່າຈະມີສາງສິນຄ້າເປັນຂອງຕົນເອງ ຈຶ່ງສະເໜີຂໍອະນຸຍາດນຳເຂົ້າ ຕາມລະບຽບການ;

6. ໃຫ້ຂະແໜງພາສີ, ຂະແໜງສ່ວຍສາອາກອນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງປະສານສົມທົບແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນຢ່າງເປັນປົກກະຕິ ແລະ ຕິດຕາມ, ກວດກາຕາມພາລະບົດບາດຂອງຂະແໜງການກ່ຽວຂ້ອງ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີກະຊວງການເງິນ**

**ສຳເນົາສົ່ງ**:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ
- ກະຊວງແຜນການ ແລະ ການລົງທຶນ 1 ສະບັບ
- ກະຊວງອຸດສາຫະກຳ ແລະ ການຄ້າ 1 ສະບັບ
- ຫ້ອງວ່າການນະຄອນຫຼວງວຽງຈັນ ແລະ ບັນດາແຂວງ 1 ສະບັບ

ສົມດີ ດວງດີ



**ເບີໂທຕິດຕໍ່: 021 223519, 021 217025 ກົມສ່ວຍສາອາກອນ ກະຊວງການເງິນ**